**ປະກາດຮັບສະໝັກພະນັກງານ 2 ຕຳແໜ່ງ**

**ຕຳແໜ່ງ ທະນາຍຄວາມ/ນັກກົດໝາຍ ປະຈຳການຢູ່ເມືອງງາ ແລະ ເມືອງນາໝໍ້, ແຂວງ ອຸດົມໄຊ**

**ໄລຍະສັນຍາ 1ປີ (ສາມາດຕໍ່ສັນຍາໃໝ່ໄດ້)**

**ກ່ຽວກັບອົງກອນ**

ສະມາຄົມເພື່ອພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ (ສພມສກ) ແມ່ນອົງການຈັດຕັ້ງທາງສັງຄົມທີ່ບໍ່ຫວັງຜົນກຳໄລ, ໂດຍໄດ້ຮັບການອະນຸຍາດສ້າງຕັ້ງຈາກ ກະຊວງພາຍໃນ ໃນປີ 2012, ມີຈຸດມຸ່ງໝາຍໃນການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ສິດທິແມ່ຍິງ, ຕ້ານການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກ, ຕ້ານການຄ້າມະນຸດ, ການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ສົ່ງເສີມໃຫ້ແມ່ຍິງສາມາດເຂົ້າເຖິງຂະບວນການຍຸຕິທຳ ໃນ ສປປ ລາວ ຜ່ານການບໍລິການຂອງຫ້ອງການໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອທາງດ້ານກົດໝາຍແກ່ແມ່ຍິງ ແລະ ເດັກ ໂດຍບໍ່ເສຍຄ່າ.

**ກ່ຽວກັບໂຄງການ**

ສະມາຄົມເພື່ອພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ ໂດຍໄດ້ຮັບການສະໜັບສະໜູນຈາກມູນນິທິເອເຊຍ (TAF) ໂດຍຜ່ານແຜນງານການຊ່ວຍເຫຼືອທາງດ້ານກົດໝາຍທີ່ໄດ້ຮັບການສະໜັບສະໜູນຈາກອົງການພັດທະນາສາກົນ ປະເທດສະຫະລັດອາເມລິກາ (USAID) ໃນການຈັດຕັ້ງປະຕິບັດໂຄງການ ສ້າງຄວາມເຂັ້ມແຂງໃນການເຂົ້າເຖິງຄວາມຍຸຕິທຳຂອງປະຊາຊົນ ເພື່ອຄວາມສະເໝີພາບຍິງ-ຊາຍ ທີ່ຈັດຕັ້ງປະຕິບັດຢູ່ເມືອງງາ ແລະ ເມືອງນາໝໍ້, ແຂວງອຸດົມໄຊ ເລີ່ມແຕ່ເດືອນມັງກອນ 2024 ຈົນເຖິງ ເດືອນກໍລະກົດ 2026.

**ໜ້າທີ່ຮັບຜິດຊອບ**

- ເຮັດວຽກພາຍໃຕ້ການຊີ້ນຳຂອງຜູ້ອຳນວຍການ, ຜູ້ຈັດການດ້ານກົດໝາຍ;
- ໃຫ້ຄຳປຶກສາ, ຄຳແນະນຳທາງດ້ານກົດໝາຍ ແລະ ເປັນຜູ້ຕາງໜ້າໃຫ້ແກ່ລູກຄວາມໃນທຸກຂັ້ນຕອນຂອງການດຳເນີນຄະດີ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍທີ່ຖືກຄວາມຮຸນແຮງໃນຄອບຄົວ ແລະ ສັງຄົມ;
- ເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍ ແລະ ບັນທຶກຂໍ້ມູນເຂົ້າໃນລະບົບຖານຂໍ້ມູນ ແລ້ວລາຍງານຫາທີມງານທະນາຍຄວາມທີ່ປະຈຳຢູ່ນະຄອນຫຼວງວຽງຈັນ;
- ຮ່າງຄຳຮ້ອງຟ້ອງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງທີ່ຈຳເປັນໃນການປົກປ້ອງລູກຄວາມ
- ປະສານງານຫາກຸ່ມເປົ້າໝາຍຂອງໂຄງການໃນການຈັດຕັ້ງກອງປະຊຸມ, ຝຶກອົບຮົມ ແລະ ກິດຈະກຳຕ່າງໆ;
- ຂຶ້ນແຜນງົບປະມານ, ສະຫຼຸບລາຍຈ່າຍ ພ້ອມທັງເຮັດບົດລາຍງານພາຍຫຼັງກິດຈະກຳສຳເລັດ;
- ຂຽນບົດລາຍງານໂຄງການປະຈຳເດືອນ, ປະຈຳໄຕມາດໃຫ້ແກ່ຜູ້ຈັດການກົດໝາຍ;
- ເປັນຕົວແທນສະມາຄົມເຂົ້າຮ່ວມກອງປະຊຸມ ຫຼື ຝຶກອົບຮົມ ທີ່ສະມາຄົມຖືກເຊີນ;
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຜູ້ອຳນວຍການ ແລະ ຜູ້ຈັດການກົດໝາຍ.

**ເງື່ອນໄຂຜູ້ສະໝັກ**

- ຈົບປະລິນຍາຕີສາຂາກົດໝາຍ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
- ເປັນທະນາຍຄວາມ ຫຼື ນັກກົດໝາຍ ທີ່ມີປະສົບການທາງດ້ານກົດໝາຍແຕ່ 2 ປີຂຶ້ນໄປ;
- ມີຄວາມຊຳນານໃນການນຳໃຊ້ ໂປແກຣມ Words, Excel, Power Point ແລະ Outlook.
- ມີທັກສະການພົວພັນປະສານງານ ຮ່ວມກັບ ໜ່ວຍງານລັດ ແລະ ອົງການຕ່າງໆ.

- ມີທັກສະການສື່ສານທີ່ດີໃນພາສາລາວ ແລະ ອັງກິດ.
- ເປັນຄົນພື້ນທີ່ແຂວງອຸດົມໄຊ ຈະຖືກພິຈາລະນາເປັນພິເສດ.

**ວິທີການສະໝັກ**

ທ່ານໃດທີ່ມີຄວາມສົນໃຈ ສາມາດສົ່ງເອກະສານສະໝັກ, ຊີວະປະຫວັດ/CV, ໃບຄຳຮ້ອງການສະໝັກວຽກ/ Cover letter, ສົ່ງມາທີ່ອີເມວ santisouk2012stk@gmail.com ພ້ອມທັງ cc phayao2018py@gmail.com ກ່ອນວັນທີ 24 ມັງກອນ 2025 ເວລາ 17:00 ໂມງ, ສອບຖາມຂໍ້ມູນເພີ່ມເຕີມ ໂທ/ວອັດແອັບ: 020 5285 2455, 020 98834422. ຜູ້ທີ່ຮັບການຄັດເລືອກຈະຖືກຕິດຕໍ່ກັບເພື່ອນັດມາສຳພາດ.

ໝາຍເຫດ: ແມ່ຍິງ, ຊົນເຜົ່າ, ຄົນພິການ ແລະ ຄົນທີ່ມີຄວາມຫຼາກຫຼາຍທາງເພດ ແມ່ນສົ່ງເສີມໃຫ້ສະໝັກ.